ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຝຶກອົບຮົມ ວຽກງານວິຊາການ ຫ້ອງສະໝຸດ



ໃນລະຫວ່າງ ວັນທີ 21-23 ທັນວາ 2020, ທີ່ຫ້ອງປະຊຸມຊັ້ນ II ສະຖາບັນການທະນາຄານ, ໄດ້ມີການຈັດຝຶກອົບຮົມວຽກງານວິຊາການຫ້ອງສະໝຸດ, ເຊິ່ງເປັນການຮ່ວມມືລະຫວ່າງ ພະແນກ ຫໍສະໝຸດ ແລະ ພິພິທະພັນ ທຫລ, ຫ້ອງສະໝຸດສະຖາບັນການທະນາຄານ ແລະ ຫໍສະໝຸດກາງ ມະຫາວິທະຍາໄລແຫ່ງຊາດ ທີ່ເປັນສະມາຊິກການຮ່ວມມືທາງດ້ານວິຊາການ ລະຫວ່າງ ຫ້ອງສະໝຸດໃນລາວ ໂດຍມີຜູ້ເຂົ້າຮ່ວມທີ່ມາຈາກຫ້ອງສະໝຸດທີ່ເປັນສະມາຊິກ ຈຳນວນ 20 ແຫ່ງທົ່ວປະເທດ.

ການຝຶກອົບຮົມໃນຄັ້ງນີ້ໄດ້ນຳສະເໜີຫົວຂໍ້‘‘ການຫັນເປັນທັນສະໄໝໃນການບໍລິຫານ, ການຄຸ້ມຄອງ ປົກປັກຮັກສາ ແລະ ສ້າງແຫຼ່ງຊັບພະຍາກອນເພື່ອການບໍລິການໃນຍຸກເຕັກໂນໂລຊີ” ການປົກປັກຮັກສາ ແລະ ການສ້າງແຫຼ່ງຊັບພະຍາກອນ ເພື່ອການບໍລິການໃນຍຸກເຕັກໂນໂລຊີ ໂດຍລົງເລິກທາງດ້ານເນື້ອໃນດັ່ງນີ້: ການບໍລິຫານຫ້ອງສະໝຸດຍຸກໃໝ່, ການສ້າງເອກະສານ (E-books) ທາງອີເລັກໂທຣນິກ, ການເຂົ້າເຖິງຂໍ້ມູນຂ່າວສານທາງອອນລາຍ, ການປົກປັກຮັກສາແຫຼ່ງຊັບພະຍາກອນ ເປັນຕົ້ນແມ່ນວາລະສານໜັງສືພິມໂດຍການສ້າງບັນນານຸກົມ (bibliography) ແລະ ການເຮັດດັດສະນີ (Index), ການລົງລາຍການບັນນານຸກົມ ແລະ ດັດສະນີໃນຖານຂໍ້ມູນ (PMB), ການບໍລິການບັນນານຸກົມ ແລະ ດັດສະນີໃນຖານຂໍ້ມູນ (PMB)’’ ພາຍຫຼັງທີ່ສຳເລັດການຝຶກອົບຮົມແລ້ວ ກໍ່ໄດ້ມີພິທີມອບໃບຢັ້ງຢືນໃຫ້ກັບນັກສຳມະນາກອນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຫໍສະໝຸດໃຫ້ໄດ້ຮັບໝາກຜົນຕາມລະດັບຄາດໝາຍທີ່ວາງໄວ້.

**# ຂ່າວ-ພາບ: ທ ສົມພິດ ທຳມະວົງ**

## ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ